**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຈັດຕັ້ງ ແລະ ພະນັກງານ

ສະບັບເລກທີ 0315 / ກຈພງ.ອຄ

ນະຄອນຫຼວງວຽງຈັນ, ວັນທີ: 02 ພຶດສະພາ 2019

**ແຈ້ງການ**

**ເລື່ອງ : ປະກາດຮັບສະໝັກສອບເສັງລັດຖະກອນໃໝ່ ປີ 2019 ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ**

- ອີງຕາມ ຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ, ລົງວັນທີ 21 ມັງກອນ 2019 ວ່າດ້ວຍການແບ່ງປັນຕົວເລກລັດຖະກອນໃໝ່ ປີ 2019
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0297/ອຄ.ກຈພງ; ລົງວັນທີ 22 ມີນາ 2019 ວ່າດ້ວຍການແບ່ງປັນຕົວເລກ ລັດຖະກອນໃໝ່ ໃຫ້ບັນດາກົມຢູ່ອ້ອມຂ້າງກະຊວງ ປະຈໍາປີ 2019.

ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງທ່ານທີ່ມີຄວາມສົນໃຈ ແລະ ມີວິຊາສະເພາະທີ່ສອດຄ່ອງກັບຕໍາແໜ່ງງານຂອງບັນດາກົມອ້ອມຂ້າງກະຊວງ ເພື່ອສະໝັກເຂົ້າເຮັດວຽກ ຢູ່ ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າເສດຖະກິດອຸດສາຫະກຳ ແລະ ການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຕົວເລກລັດຖະກອນໃໝ່ ທີ່ລັດຖະບານໄດ້ແບ່ງປັນໃຫ້ ຈໍານວນ 12 ຕົວເລກ ປະຈໍາປີ 2019, ດັ່ງມີລາຍລະອຽດລຸ່ມນີ້:

➢ **ມາດຖານເງື່ອນໄຂລວມຂອງຜູ້ທີ່ຈະສະໝັກເຂົ້າສອບເສັງ:**

1. ຖືສັນຊາດລາວໂດຍກໍາເນີດ ຫຼື ໄດ້ຮັບສັນຊາດລາວແຕ່ 3 ປີ ຂຶ້ນໄປ.
2. ມີອາຍຸ 18 ຂຶ້ນໄປ ແຕ່ບໍ່ເກີນ 35 ປີ.
3. ເປັນພົນລະເມືອງດີ,ມີຄຸນສົມບັດດີ,ມີຄວາມຈົງຮັກພັກດີຕໍ່ລະບອບປະຊາທິປະໄຕ ປະຊາຊົນ.
4. ບໍ່ເຄີຍຖືກສານປະຊາຊົນ ຕັດສິນລົງໂທດ ແລະ ບໍ່ຖືກລົງວິໄນຈາກອົງການຈັດຕັ້ງຕ່າງໆ.
5. ມີປະຫວັດການເຄື່ອນໄຫວຂອງຕົນ ແລະ ຄອບຄົວ ທີ່ຈະແຈ້ງ.
6. ມີວິຊາສະເພາະໃຫ້ສອດຄ່ອງກັບຕໍາແໜ່ງງານ.
7. ມີສຸຂະພາບແຂງແຮງ ແລະ ມະນຸດສໍາພັນດີ.

➢ **ວິຊາທີ່ຕ້ອງການ ແລະ ມາດຖານສະເພາະດັ່ງນີ້:**

➢ **ວິຊາທີ່ຕ້ອງການ ແລະ ມາດຖານສະເພາະດັ່ງນີ້:**

| ລ/ດ | ລາຍຊື່ບັນດາກົມ | ຊັ້ນ/ວິຊາສະເພາະ | ມາດຖານເງື່ອນໄຂສະເພາະ ຂອງຜູ້ສະໝັກສອບເສັງ | ໝາຍເຫດ |
|---|---|---|---|---|
| 1 | ຫ້ອງການກະຊວງ<br>(01 ຕໍາແໜ່ງ) | **(ຊັ້ນສູງຂຶ້ນໄປ)**<br>- ໄຟຟ້າເອເລັກໂທນິກ<br>- ຄຸ້ມຄອງຫ້ອງການ | - ມີຄວາມຮູ້ພື້ນຖານໃນການນໍາໃຊ້ຄອມພິວເຕີ Word , Excel<br>- ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດ ຫຼື ພາສາຕ່າງປະເທດໃດໜຶ່ງ ໄດ້ໃນລະດັບດີ | - ຜູ້ສະໝັກຕ້ອງໄດ້ມາຊື້ຟອມດ້ວຍຕົນເອງ<br>- ຜູ້ທີ່ມາຊື້ຟອມສະໝັກສອບເສັງໃຫ້ຖືໃບປະກາດສະນີຍາບັດມາພ້ອມ ເພື່ອກວດສອບວິຊາສະເພາະໃຫ້ຖືກຕ້ອງຕາມຕໍາແໜ່ງງານທີ່ຕ້ອງການຂອງແຕ່ລະກົມ. |
| 2 | ກົມຈັດຕັ້ງ ແລະ ພະນັກງານ<br>(01 ຕໍາແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ພັດທະນາຊັບພະຍາກອນມະນຸດ ຫຼື ບໍລິຫານຊັບພະຍາກອນມະນຸດ (HRD-HRM) | - ຄະແນນຈົບສະເລ່ຍ 3.0 ຂຶ້ນໄປ<br>- ມີຄວາມຮູ້ພື້ນຖານໃນການນໍາໃຊ້ຄອມພິວເຕີ Word , Excel<br>- ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ (ຕ້ອງມີໃບປະກາດຫຼືໃບຢັ້ງຢືນ) | |
| 3 | ກົມກວດກາ<br>(01 ຕໍາແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ວິທະຍາສາດການເມືອງ<br>- ສະຖິຕິ-ແຜນການ | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ<br>- ມີຄວາມຮູ້ພື້ນຖານໃນການນໍາໃຊ້ຄອມພິວເຕີ Word, Excel, Internet<br>- ເຮັດວຽກເປັນທີມ ແລະ ສາມາດເດີນທາງໄປຕ່າງແຂວງໄດ້<br>- ມີທັກສະການສ້າງແຜນການ, ການວິເຄາະ ວິໄຈ ແລະ ການສະຫຼຸບວຽກງານຕ່າງໆ | |
| 4 | ກົມແຜນການ ແລະ ການຮ່ວມມື<br>(01 ຕໍາແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ການຄ້າຕ່າງປະເທດ<br>- ກົດໝາຍ(ທຸລະກິດ) | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດ ຫຼື ພາສາຕ່າງປະເທດໃດໜຶ່ງ (ມີໃບປະກາດຈະພິຈາລະນາເປັນພິເສດ)<br>- ມີຄວາມຮູ້ພື້ນຖານໃນການນໍາໃຊ້ຄອມພິວເຕີ Word, Excel, Internet | |

| ລ/ດ | ລາຍຊື່ບັນດາກົມ | ຊັ້ນ/ວິຊາສະເພາະ | ມາດຖານເງື່ອນໄຂສະເພາະ ຂອງຜູ້ສະໝັກສອບເສັງ | ໝາຍເຫດ |
|---|---|---|---|---|
| 5 | ກົມອຸດສາຫະກຳ ແລະ ຫັດຖະກຳ (01 ຕຳແໜ່ງ) | **(ປະລິນຍາຕີຈົບຈາກ ຕ່າງປະເທດ ຫຼື ປ.ໂທຈົບພາຍ ໃນ)**<br>- ວິສະວະກຳ (ສິ່ງແວດລ້ອມ-ເຄມີ) | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ (ຖ້າໄດ້ພາສາຈີນ ແລະ ພາສາຫວຽດນາມ ຈະພິຈະລະນາເປັນພິເສດ)<br>- ມີຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ Word , Excel<br>- ສາມາດເຮັດວຽກເປັນທີມໄດ້ | - ຜູ້ສະໝັກຕ້ອງໄດ້ມາຊື້ຟອມດ້ວຍຕົນເອງ<br>- ຜູ້ທີ່ມາຊື້ຟອມສະໝັກສອບເສັງໃຫ້ຖືໃບປະກາດສະນີຍາບັດມາພ້ອມ ເພື່ອກວດສອບວິຊາສະເພາະໃຫ້ຖືກຕ້ອງຕາມຕຳແໜ່ງງານທີ່ຕ້ອງການຂອງແຕ່ລະກົມ. |
| 6 | ກົມການຄ້າພາຍໃນ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ເສດຖະສາດ<br>- ການຄ້າ | - ຄະແນນສອບເສັງຫຼື ປ້ອງກັນບົດ 3.0<br>- ຜົນການຮຽນແຕ່ລະປີ 2.5<br>- ສາມາດເວົ້າ, ອ່ານ, ຂຽນ ພາສາຕ່າງປະເທດໃດໜຶ່ງເຊັ່ນ: ອັງກິດ, ຈີນ ຫວຽດນາມ (ຕ້ອງມີໃບປະກາດຫຼື ໃບຢັ້ງຢືນ) | |
| 7 | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ກົດໝາຍວິສາຫະກິດ | - ຄະແນນຈົບສະເລ່ຍ 2.7 ຂຶ້ນໄປ<br>- ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ<br>- ມີຄວາມຮູ້ທາງດ້ານໄອທີ (IT) ໃນລະດັບດີ | |
| 8 | ກົມນະໂຍບາຍການຄ້າຕ່າງປະເທດ (01 ຕຳແໜ່ງ) | **(ປະລິນຍາໂທຂຶ້ນໄປ)**<br>- ເສດຖະສາດລະຫວ່າງປະເທດ | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດ ຫຼື ພາສາຕ່າງປະເທດໃດໜຶ່ງ ໄດ້ໃນລະດັບດີ | |
| 9 | ກົມການນຳເຂົ້າ ແລະ ສົ່ງອອກ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ເສດຖະສາດ<br>- ການຄ້າຕ່າງປະເທດ | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ (ມີໃບປະກາດຈະພິຈາລະນາເປັນພິເສດ)<br>- ຄະແນນຈົບສະເລ່ຍ 3.2 ຂຶ້ນໄປ | |

| ລ/ດ | ລາຍຊື່ບັນດາກົມ | ຊັ້ນ/ວິຊາສະເພາະ | ມາດຖານເງື່ອນໄຂສະເພາະ ຂອງຜູ້ສະໝັກສອບເສັງ | ໝາຍເຫດ |
|---|---|---|---|---|
| 10 | ກົມສົ່ງເສີມການຄ້າ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ການຄ້າລະຫວ່າງປະເທດ<br>- ການຕະຫຼາດ | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດ ຫຼື ພາສາຕ່າງປະເທດໃດໜຶ່ງ ໄດ້ໃນລະດັບດີ | -ຜູ້ສະໝັກຕ້ອງໄດ້ມາຊື້ຟອມດ້ວຍຕົນເອງ<br>- ຜູ້ທີ່ມາຊື້ຟອມສະໝັກສອບເສັງໃຫ້ຖືໃບປະກາດສະນີຍາບັດມາພ້ອມ ເພື່ອກວດສອບວິຊາສະເພາະໃຫ້ຖືກຕ້ອງຕາມຕຳແໜ່ງງານທີ່ຕ້ອງການຂອງແຕ່ລະກົມ. |
| 11 | ກົມສົ່ງເສີມວິສາຫະກິດຂະ ໜາດນ້ອຍ ແລະ ກາງ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- ບໍລິຫານທຸລະກິດສາກົນ<br>- ເສດຖະສາດທົ່ວໄປ | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ<br>- ມີຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ Word, Excel, Internet | |
| 12 | ສະຖາບັນຄົ້ນຄ້ວາເສດຖະກິດ ອຸດສາຫະກຳ ແລະ ການຄ້າ (01 ຕຳແໜ່ງ) | **(ປະລິນຍາຕີຂຶ້ນໄປ)**<br>- IT | - ສາມາດເວົ້າ, ອ່ານ, ຂຽນ ພາສາອັງກິດໄດ້ໃນລະດັບດີ (ມີໃບປະກາດຈະພິຈາລະນາເປັນພິເສດ) | |

- ❖ ຕິດຕໍ່ພົວພັນຊື້ແບບຟອມສອບເສັງ ທີ່ ກົມຈັດຕັ້ງ ແລະ ພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ຊັ້ນ 3. ໂທຕິດຕໍ່ພົວພັນສອບຖາມ: 021 454903, 021 416139.
- ❖ ເປີດຂາຍຟອມສອບເສັງ ວັນທີ **08-09 ພຶດສະພາ 2019** (ຕາມວັນເວລາລັດຖະການ).
- ❖ ປິດຮັບສະໝັກຟອມສອບເສັງ **ວັນທີ 10 ພຶດສະພາ 2019** (ຕາມວັນເວລາລັດຖະການ).
- ❖ ກຳນົດມື້ສອບເສັງ **ວັນທີ 21 ພຶດສະພາ 2019 ເວລາ 8:30** ທີ່ຫ້ອງປະຊຸມໃຫຍ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ❖ ສາມາດຕິດຕາມລາຍລະອຽດໄດ້ໃນ **ໜັງສືພິມເສດຖະກິດ-ການຄ້າ** ແລະ http://www.moic.gov.la/

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ສະໝັກເຂົ້າຮ່ວມຕາມແຈ້ງການດ້ວຍ.

**ຫົວໜ້າກົມ**

ນ.ຈັນສຸກ ແສງພະຈັນ